ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດລາວເວີນ ມະຫາຊົນ
ອາຄານລາວໄອເຕັກ, ຖະນົນກຳແພງເມືອງ
ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ
ໂທ 021 41 5477, ແຟັກ 021 41 5409

ເລກທີ 0289 /ລວມຊ
ວັນທີ 13 MAR 2017

ຮຽນ : ນັກລົງທຶນຂອງບໍລິສັດ ລາວເວີນ ມະຫາຊົນ
ເລື່ອງ : ກ່ຽວກັບການຜັນຜວນ ຂອງລາຄາຮຸ້ນ ແລະຂ່າວລືການໂອນກິດຈະການຂອງບໍລິສັດ

- ອີງຕາມຂໍ້ຕົກລົງ ຂອງຄະນະກຳມະການຄຸ້ມຄອງ ຫຼັກຊັບວ່າດ້ວຍ ລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 22/LSX, ລົງ ວັນທີ 07 ມັງກອນ 2011.
- ອີງຕາມຈົດໝາຍເລກທີ 070/ຕລຊລ. ລົງວັນທີ 09/03/2017 ຂອງຕະຫລາດຫລັກຊັບລາວ,

ບໍລິສັດລາວເວີນ ມະຫາຊົນ ຂໍຖືເປັນກຽດຊີ້ແຈງມາຍັງບັນດາທ່ານກ່ຽວກັບສະພາບການເໜັງຕີງ ຂອງລາຄາຮຸ້ນ ແລະ ບັນຫາຕ່າງໆດັ່ງລຸ່ມນີ້:

1. ການຊື້-ຂາຍຮຸ້ນໃນຕະຫລາດຫລັກຊັບຂອງບໍລິສັດ ລາວເວີນ ມະຫາຊົນ ໃນຊ່ວງໄລຍະວັນທີ 01-06 ມິນາ 2017 ທີ່ມີການຊື້ຂາຍຂອງນັກລົງທຶນ ເຊິ່ງເຮັດໃຫ້ການໜັງເຕີງຂອງລາຄາຮຸ້ນ ມີການຜັນຜວນຮຸນແຮງນັ້ນ ບໍລິສັດ ລາວເວີນ ມະຫາຊົນ ຂໍຊີ້ແຈງວ່າ ກຸ່ມນັກລົງທຶ່ມີການຊື້-ຂາຍຮຸ້ນນັ້ນແມ່ນບໍ່ກ່ຽວຂ້ອງແຕ່ຢ່າງໃດກັບບໍລິສັດ ຂອງພວກເຮົາ.

2. ສຳລັບຂ່າວລືກ່ຽວກັບການໂອນກິດຈະການ ຫລືການປ່ຽນແປງຜູ້ຖືຮຸ້ນລາຍໃຫຍ່ນັ້ນ ພວກ ເຮົາຂໍຊີ້ແຈ່ງວ່າ ໃນໄລຍະຜ່ານມາ ໄດ້ມີຄົນສົນໃຈ ໃນກິດຈະການຂອງພວກເຮົາແທ້ ແຕ່ ການໂອນກິດຈະການທັ້ງໝົດແມ່ນບໍ່ມີ, ສ່ວນການປ່ຽນແປງຜູ້ຖືຮຸ້ນລາຍໃຫຍ່ນັ້ນ ຕ້ອງໄດ້ຂໍ ອະນຸມັດຜ່ານກອງປະຊຸມໃຫຍ່ຜູ້ຖືຮຸ້ນ ແຕ່ເຖິງປັດຈຸບັນນີ້ ແມ່ນຍັງບໍ່ທັນມີ ແຕ່ຖ້າຫາກຈະມີ

ການປ່ຽນແປງ ບໍລິສັດຈະຕ້ອງໄດ້ຮັບການເຫັນດີ ຈາກກອງປະຊຸມ ຜູ້ຖືຮຸ້ນກ່ອນ ແລະ ຈຶ່ງ ໄດ້ມີການແຈ້ງ ຕໍ່ພາກສ່ວນກ່ຽວຂ້ອງ ແລະເປີດເຜີຍ ໃຫ້ສາທາລະນະຊົນ ຊາບຢ່າງທັນທີ ຕາມລະບຽບການ.

ດັ່ງນັ້ນ ຈຶ່ງຮຽນສະເໜີຊີ້ແຈງມາຍັງທ່ານ ເພື່ອຮັບຊາບ ແລະ ຖ້າວ່າທ່ານມີຄຳເຫັນ ຫຼື ຂໍ້ສົງໄສ ເພີ່ມເຕີມພວກເຮົາຍິນດີໃຫ້ຄວາມຮ່ວມມືທ່ານທຸກປະການ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ຜູ້ອຳນວຍການ

ບໍລິສັດ ລາວເວີ້ນ ມະຫາຊົນ LAO WORLD PUBLIC COMPANY

ວິສັນ ນະລົງສັກ
Visanh NALONGSAK